

# ຟາມໄກ່ໂຄໂຍຕີ່

ຂ້າພະເຈົ້າຊື່ ນາງ ເນດ ເພັດແສງທອງ, ອາຍຸ 22 ປີ. ຮຽນຈົບຊັ້ນສູງ ສາຍພາສາອັງກິດທົ່ວໄປ ຈາກວິທະຍາໄລ ອາສາພັດທະນາ. ທີ່ສະໝັກເຂົ້າຮ່ວມກິດຈະກໍາດັ່ງກ່າວ ເພາະຊ່ວງທີ່ກິດຈະກໍານີ້ປະກາດຮັບສະໝັກ ຂ້າພະເຈົ້າກໍາລັງໃກ້ຈະຮຽນຈົບ ແລະ ບໍ່ຮູ້ວ່າຈະໄປສະໝັກວຽກໃສ ຈຶ່ງລອງສະໝັກ ຖ້າໄດ້ທຶນ ເຖິງບໍ່ໄດ້ໄປເຮັດວຽກໃສ ກໍ່ຍັງມີໂອກາດສ້າງທຸລະກິດຂອງຕົວເອງ.

**ທຶນທີ່ໄດ້ຮັບ:** ໄດ້ຮັບທຶນຈາກໂຄງການໃນປີ 2019 ທັງໝົດແມ່ນ 10,295,000 ກີບ. (ສິບລ້ານສອງແສນເກົ້າສິບຫ້າພັນກີບຖ້ວນ).

**ປະເພດທຸລະກິດ:**
ທຸລະກິດທີ່ຂ້າພະເຈົ້າເຮັດແມ່ນການລ້ຽງໄກ່ລາດ, ທີ່ເລືອກເຮັດທຸລະກິດນີ້ຍ້ອນວ່າບ້ານຂອງຂ້າພະເຈົ້າປະຊາຊົນນິຍົມບໍລິໂພກໄກ່ ແລະ ທີ່ສ□າຄັນຊົນເຜົ່າກຶມມຸນິຍົມໃຊ້ໄກ່ລາດໃນຮີດຄອງປະເພນີ. ປັດຈຸບັນແມ່ນລ້ຽງໄກ່, ປູກຜັກ, ເຮັດໄຄແຜ່ນ, ລ້ຽງເປັດ, ຫ່ານ ແລະ ໝູ.

**ການນໍາໃຊ້ທຶນ:**
ໃນປີ 2019 ຂ້າພະເຈົ້າໄດ້ເລີ່ມເຮັດທຸລະກິດໂດຍການປັບໜ້າດິນ (ເນື່ອງຈາກດິນຂອງຂ້າພະເຈົ້າເປັນເນີນພູ) ຂະໜາດ 15 x 20 ແມັດ, ສ້າງຄອກໄກ່ 1 ຫຼັງ ຂະໜາດ 6 x 12 ແມັດ, ລ້ອມຮົ້ວຄອກໄກ່, ປັບດິນເຮັດໜານປູກຜັກຈໍານວນ 15 ໜານ, ຂະໜາດສວນຜັກ 20 x 30 ແມັດ, ຊື້ພໍ່ໄກ່ 20 ໂຕ , ແມ່ພັນໄກ່ 65 ໂຕ ແລະ ໄກ່ນ້ອຍ 25 ຄູ່.

**ເປົ້າໝາຍ:**
ເປົ້າໝາຍຂອງທຸລະກິດພາຍໃນປີ 2020 ແມ່ນຈະຂາຍໄກ່ຊີ້ນໃຫ້ໄດ້ປະມານ 600 ໂຕ.

**ບັນຫາທີ່ພົບພໍ້:**
ຊ່ວງທີ່ໄດ້ດໍາເນີນທຸລະກິດແມ່ນຖືກຊ່ວງ ໂຄວິດ 19 ລະບາດ ເລີຍເຮັດໃຫ້ການຊອກຊື້ໄກ່ພໍ່ພັນແມ່ພັນບໍ່ໄດ້ຕາມຈໍານວນ (ນໍາເງິນສ່ວນທີ່ຈະຊື້ພໍ່ພັນແມ່ພັນໄກ່ ມາຊື້ໄກ່ນ້ອຍເພີ່ມ ຈາກແຜນ 20 ຄູ່ ເປັນ 30 ຄູ່). ຊ່ວງທີ່ຝົນຕົກຫຼາຍໄກ່ນ້ອຍຈໍານວນໜຶ່ງຕາຍເພາະປຽກຝົນ ໄດ້ແກ້ໄຂບັນຫາໂດຍແບ່ງໄກ່ນ້ອຍທີ່ຂັງໄວ້ ໃຫ້ໃຫຍ່ກ່ອນຈຶ່ງປ່ອຍ, ຄວາມສາມາດໃນການສັກຢາໃຫ້ໄກ່ຍັງບໍ່ພຽງພໍ ເພາະຍັງຢ້ານ ຈຶ່ງໄດ້ຈ້າງຄົນທີ່ຊໍານານກວ່າມາສັກໃຫ້. ໄດ້ມີການຂ້າເຊື້ອອ້ອມຮອບບໍລິເວນຄອກໄກ່ ແລະ ໃຫ້ຜູ້ຊື້ຖ້າຢູ່ດ້ານນອກ ເຮັດໃຫ້ໄກ່ເຮົາມີສຸຂະພາບແຂງແຮງ, ປາສະຈາກພະຍາດ.

**ລາຍຮັບຍັງບໍ່ໄດ້ຫັກຄ່າໃຊ້ຈ່າຍ:**
- ໃນປີ 2020, ຂາຍໄກ່ 147,3 ກິໂລ, ເປັດ 17,9 ກິໂລ, ຜັກກາດ 114 ກິໂລ, ຜັກສະຫຼັດ 17 ກິໂລ, ຫອມບົ່ວ 51 ກິໂລ ແລະ ຫອມປ້ອມ 30 ກິໂລ. ລວມລາຍຮັບທັງໝົດແມ່ນ 10,502,000 ກີບ.
- ໃນປີ 2021 ຂາຍຜັກ 337 ກິໂລ, ຂາຍໄກ່ ແລະ ເປັດ 505,8 ກິໂລ, ຕົກເປັນເງິນທັງໝົດ 23,115,000 ກີບ.



